ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສະຫະພັນແມ່ຍິງ ທຫລ ເຄື່ອນໄຫວສ້າງຂະບວນການເນື່ອງໃນໂອກາດວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 65 ປີ




ເພື່ອເປັນການສ້າງຂະບວນການເນື່ອງໃນໂອກາດວັນສ້າງຕັ້ງອົງການຈັດຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 65 ປີ, ໃນຕອນເຊົ້າຂອງວັນທີ 29 ກໍລະກົດ 2020 ສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສ້າງຂະບວນການເຄື່ອນໄຫວຢ້ຽມຢາມສະຖານທີ່ສຳຄັນຂອງສູນກາງສະຫະພັນແມ່ຍິງລາວ 2 ແຫ່ງຄື: ຫໍມູນເຊື້ອແມ່ຍິງລາວ ແລະ ຫ້ອງວາງສະແດງສິນສາຍໄໝ. ຊຶ່ງທັງສະຖານທີ່ທັງສອງແຫ່ງເປັນສະຖານທີ່ເກັບຮັກສາຜົນງານ ແລະ ໃຫ້ຄວາມຮູ້ທາງປະຫວັດສາດຂອງແມ່ຍິງລາວນັບຕັ້ງແຕ່ອາດີດຈົນຮອດປັດຈຸບັນ ເພື່ອໃຫ້ຄົນລຸ້ນຫຼັງໄດ້ຮັບຮູ້ເຖິງມູນເຊື້ອອັນດີງາມຂອງເອື້ອຍນ້ອງແມ່ຍິງລາວທີ່ໄດ້ສ້າງໄວ້; ສຳລັບ ຫ້ອງວາງສະແດງສິນສາຍໄໝກໍ່ເປັນສະຖານທີ່ວາງສະແດງຜົນງານດ້ານຫັດຖະກຳການຕ່ຳຫູກທໍໄໝດ້ວຍຝີມືຂອງແມ່ຍິງລາວທີ່ມີຄວາມລະອຽດ ປານີດ ສວຍງາມຈົນໄດ້ຮັບລາງວັນ ແລະ ການຍ້ອງຍໍໃນລະດັບສາກົນ.

# ຂ່າວໂດຍ: ວັນປະເສີດ ສີມບູນຂັນ.

# ພາບໂດຍ: ສົມອົກ ເຄນຄຳແພງ, ນ. ວັນປະເສີດ ສີມບູນຂັນ.

ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ